ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222,451116 ແຟັກ: 451117

PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117

E-mail:Lcc@laocement.com,www.laocement.com

ເລກທີ 158 /ບຊລ

ນະຄອນຫລວງວຽງຈັນ, ວັນທີ 01 JUL 2020

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

: ທ່ານ ຜູ້ອຳນວຍການໃຫ່ຍຕະຫລາດຫຼັກຊັບລາວ

: ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຄັ້ງວັນທີ 30/06/2020

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບໍລິສັດ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2019 (ຕໍ່ໄປນີ້ຮຽກວ່າ : ກອງປະຊຸມ) ໄດ້ໄຂຂຶ້ນໃນເວລາ 14:00 ຫາ 16:00 ໂມງ ຂອງວັນທີ 30/06/2020 ທີ່ຫ້ອງປະຊຸມຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ ນະຄອນຫຼວງວຽງຈັນ ໂດຍ ການເປັນປະທານຂອງ ທ່ານ ຈ່ຳງລີ ຜູ້ອຳນວຍການ ບຊລ, ພ້ອມດ້ວຍສະມາຊິກສະພາບໍລິຫານ ບຊລ, ຊຶ່ງມີຜູ້ເຂົ້າຮ່ວມກອງປະຊຸມທັງໝົດ 26 ທ່ານ, ໃນນີ້ ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນທັງໝົດ 21 ທ່ານ, ຜູ້ມອບສິດຈຳນວນ 05 ທ່ານ, ຊຶ່ງກວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ **35,595,200** ຮຸ້ນ, ນັບທັງຮຸ້ນທີ່ຖືກມອບສິດ, ບັນລຸອັດຕາສ່ວນ 89% ຂອງຈຳນວນຮຸ້ນ ບຊລ ທັງ ໝົດ ແລະຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມລະບຽບການຂອງ ບຊລ ແລະ ກົດໝາຍທີ່ກ່ຽວຂ້ອງ, ສຳລັບຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມມີຈຳນວນ 4,408,800 ຮຸ້ນເທົ່າກັບ 11% ຂອງຈຳນວນຮຸ້ນ ບຊລ.

<u>ກອງປະຊຸມໄດ້ພິຈາລະນາ ແລະມີມະຕິດັ່ງນີ້</u> :

- **ວາລະທີ 1:** ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ.

- **ວາລະທີ 2:** ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2018.

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,595,200 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 3:** ພິຈາລະນາ ແລະ ຮັບຮອງການປ່ຽນແປງສະມາຊິກສະພາບໍລິຫານຂອງບໍລິສັດ.

  1. ເຫັນດີໃຫ້ທ່ານ ຫຼີວເຫວີຍ ລາອອກຈາກຕຳແໜ່ງປະທານສະພາບໍລິຫານ ຂອງບໍລິສັດຊີມັງລາວ ມະຫາຊົນ
  2. ເຫັນດີໃຫ້ທ່ານ ບຸນແປງ ບົວພັນ ລາອອກຈາກຕຳແໜ່ງຮອງປະທານສະພາບໍລິຫານຂອງ ບໍລິສັດ ຊີມັງລາວມະຫາຊົນ
  3. ເຫັນດີໃຫ້ ທ່ານ ທອງປົນ ກົ່ງຄຳເພັດ ລາອອກຈາກຕຳແໜ່ງກຳມະການສະພາບໍລິຫານ,ຮອງອຳນວຍການໃຫຍ່ຂອງ ບໍລິສັດຊີມັງ ລາວມະຫາຊົນ
  4. ເຫັນດີໃຫ້ທ່ານ ຫຼີໝິງ ລາອອກຈາກຕຳແໜ່ງກຳມະການສະພາບໍລິຫານຂອງບໍລິສັດຊີມັງລາວມະຫາຊົນ
  5. ເຫັນດີໃຫ້ທ່ານ ຈ້າວຊົ່ງເຊີນ ລາອອກຈາກຕຳແໜ່ງເລຂາ ສະພາບໍລິຫານຂອງບໍລິສັດຊີມັງລາວ ມະຫາຊົນ
  6. ເຫັນດີແຕ່ງຕັ້ງທ່ານ ຢາງຊຸນຢິງ ເປັນປະທານສະພາບໍລິຫານຂອງ ບໍລິສັດຊີມັງ ລາວມະຫາຊົນ
  7. ເຫັນດີແຕ່ງຕັ້ງທ່ານ ອັນທອງ ສິດທິກຸນ ເປັນຮອງປະທານສະພາບໍລິຫານ ຂອງບໍລິສັດຊີມັງລາວ ມະຫາຊົນ
  8. ເຫັນດີແຕ່ງຕັ້ງທ່ານ ອູຢາງຈີຢິງ ເປັນຮອງປະທານສະພາບໍລິຫານຂອງບໍລິສັດຊີມັງລາວມະຫາຊົນ
  9. ເຫັນດີແຕ່ງຕັ້ງທ່ານ ວິຈິດ ສຸວັນນະລາດ ເປັນກຳມະການສະພາບໍລິຫານ ແລະ ຮອງອຳນວຍການ ບໍລິສັດຊີມັງລາວມະຫາຊົນ
  10. ເຫັນດີແຕ່ງຕັ້ງທ່ານ ຈ້າວປິ່ງປິ່ນ ເປັນເລຂາ ສະພາບໍລິຫານຂອງບໍລິສັດຊີມັງລາວມະຫາຊົນ

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,595,200 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 4**: ພິຈາລະນາແລະຮັບຮອງບົດລາຍງານວຽກງານການດຳເນີນທຸລະກິດ ຂອງບໍລິສັດຊີມັງລາວ ມະຫາຊົນ ປະຈຳປີ 2019
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :
  - ເຫັນດີຈຳນວນ 28,047,400 ສຽງ ເທົ່າກັບ 79 %
  - ບໍ່ເຫັນດີຈຳນວນ 7,547,800 ສຽງ ເທົ່າກັບ 21 %
- **ວາລະທີ 5** : ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນ ຂອງບໍລິສັດຊີມັງລາວມະຫາຊົນປະຈຳປີ 2019
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :
  - ເຫັນດີຈຳນວນ 35,595,200 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %
- **ວາລະທີ 6** : ພິຈາລະນາ ແລະ ຮັບຮອງທິດທາງການປັນຜົນໃຫ້ແກ່ຜູ້ຖືຮຸ້ນ ປະຈຳປີ 2019
- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :
  - ເຫັນດີຈຳນວນ 28,047,400 ສຽງ ເທົ່າກັບ 79 %
  - ບໍ່ເຫັນດີຈຳນວນ 7,547,800 ສຽງ ເທົ່າກັບ 21 %
- **ວາລະທີ 07** :ພິຈາລະນາ ແລະ ຮັບຮອງບົດລາຍງານແຜນດຳເນີນທຸລະກິດຂອງ ບໍລິສັດ ຊີມັງລາວ ມະຫາຊົນປະຈຳປີ 2020

ປີ 2020 ຄາດວ່າຈະຜະລິດ ແລະຈຳໜ່າຍຊີມັງໃຫ້ໄດ້ຈຳນວນ 150,000 ໂຕນ, ສູ້ຊົນດຳເນີນທຸລະກິດການຜະລິດບໍ່ໃຫ້ຂາດທຶນ ເນື່ອງຈາກວ່າມີຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ແຜນການຜະລິດຂອງພວກເຮົາທີ່ຕັ້ງໄວ້ຈະມີການປັບປຸງອີງຕາມສະພາບຕົວຈິງ.

- ວຽກຫຼັກທີ່ຈະໄດ້ປະຕິບັດໃນປີ 2020 ມີດັ່ງລຸ່ມນີ້ :

1. ຂະຫຍາຍການປຸງແຕ່ງຫີນປູນເພື່ອຈຳໜ່າຍສູ່ຕະຫຼາດພາຍນອກ,ໃນເດືອນ 04/2020 ໄດ້ເລີ່ມດຳເນີນຜະລິດຫີນປູນ ແລະດິນຊາຍຟູ,ຄາດວ່າເດືອນ 04ຫາເດືອນ 12/2020 ຈະສາມາດຈຳໜ່າຍອອກສູ່ຕະຫຼາດພາຍນອກ ຈຳນວນ 150,000 m^3.
2. ສືບຕໍ່ປະຕິຮູບຫຼຸດຜ່ອນຈຳນວນພົນ ແລະເພີ່ມປະສິດທິພາບໃນການປັບປຸງເຕັກນິກການຜະລິດ ເພື່ອຫຼຸດຄ່າສິ້ນເປືອງພະລັງງານ.
3. ຫຼຸດຜ່ອນ ຫຼືຢຸດສະໜອງຊີມັງໃນລາຄາຕ່ຳຕາມສັນຍາ,ວິ້ງເຕີ້ນວຽກງານການເກັບໜີ້ສິນ.

4. ຮີບເລັ່ງພັດທະນາຊັບພະຍາກອນຖ່ານຫີນ ແລະ ຜ່ານບົດລາຍງານປະລິມານສະສົມຖ່ານຫີນ ເພື່ອດຶງດູດຜູ້ຮ່ວມມືມາພ້ອມກັນພັດທະນາໃຫ້ໄດ້ຮັບໝາກຜົນ ແລະກາຍ ເປັນຊັບສິນຂອງບໍລິສັດ.

- **ມະຕິ** : ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,595,200 ສຽງ ເທົ່າກັບ 100%
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0%

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານ ເພື່ອຊາບ ໃຊ້ຕາງລາຍງານ
ດ້ວຍຄວາມເຄົາລົບ ແລະນັບຖືເປັນຢ່າງສູງ,

ປະທານກອງປະຊຸມ

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ຈ່າງລີ້

ໝາຍເຫດ :
ເອກະສານທັງໝົດນີ້ໃຫ້ຖືເອົາສະບັບພາສາລາວເປັນຫຼັກ